## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດທີ 26 ກຸມພາ 2017 (02-26-2017)

## ໃຫ້ດ້ວຍຄວາມຍິນດີ

ເມື່ອໃດທີ່ທ່ານມີຄວາມຮູ້ສຶກວ່າຢາກເລີ້ມຕົ້ນໃຫ້ບາງສິ່ງບາງຢ່າງແກ່ຄົນອື່ນ?

**ຈຸດສໍາຄັນໃນບົດຮຽນ**: ເຂົ້າຮ່ວມກັບພຣະເຈົ້າໃນພຣະຣາຊະກິດຂອງພຣະອົງໃນການໃຫ້ ເພື່ອຜົນປໂຍດຂອງຄົນອື່ນ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ສ່ວນຫຼາຍໃນພວກເຮົາປາຖນາຢາກໄດ້ເງິນ. ສ່ວນຫຼາຍພວກເຮົາມັກໃຊ້ຈ່າຍເງິນ. ແຕ່ຕາມປົກກະຕິ ພວກເຮົາບໍ່ມັກເວົ້າເຖິງເຣື່ອງນີ້ ໂດຍສະເພາະໃນຄຣິສຕະຈັກ.

ທ່ານຈະແປກໃຈບໍ່ທີ່ຮູ້ວ່າສິດຍາພິບານທັງຫຼາຍກໍບໍ່ມັກເວົ້າເຣື່ອງເງິນເໝືອນກັນ? ສິດຍາພິບານບໍ່ມີຄວາມປາຖນາທີ່ຈະເປັນຄົນໂລບມາກ, ຫຼືກ່ຽວຂ້ອງກັບ "ນັກເທດທີ່ຮັ່ງມີ" ນັກເທສນາພວກນີ້ເວົ້າວ່າຖ້າຫາກທ່ານຍິ່ງຖວາຍຫຼາຍເທົ່າໃດ, ພຣະເຈົ້າຈະອວຍພຣະພອນໃຫ້ທ່ານມີສຸຂພາບດີ, ຮັ່ງມີ, ແລະຈະເຣີນຮຸ່ງເຮືອງຫຼາຍຍິ່ງຂຶ້ນເທົ່ານັ້ນ.

ໃນພຣະທັມຟີລິບປອຍ ບົດທີ 4, ເຖິງປານນັ້ນກໍດີ, ພວກເຮົາເຫັນວ່າອາຈານໂປໂລຂ້ອນຂ້າງສະບາຍໃຈໃນການເວົ້າກ່ຽວກັບການເງິນ. ເພິ່ນສະບາຍໃຈດໍາຣົງຊີວິດຢູ່ກັບເງິນ, ແລະເພິ່ນສະບາຍໃຈດໍາຣົງຊີວິດໂດຍປາສຈາກເງິນ. ເປັນໄປໄດ້ຢ່າງໃດ? ອາຈານໂປໂລມີຄວາມພໍໃຈບໍ່ວ່າເພິ່ນຈະຢູ່ໃນສະຖານະການດ້ານເສຖກິດແນວໃດກໍຕາມ ເພາະວ່າຄວາມເພິ່ງພໍໃຈຂອງເພິ່ນແລະຄວາມຊື່ນຊົມຍິນດີຂອງເພິ່ນແມ່ນຢູ່ໃນອົງພຣະເຢຊູຄຣິດເຈົ້າ.

ໃຫ້ພວກເຮົາຄົ້ນຄວ້າເລິກໄປລົງໃນຄວາມຊື່ນຊົມຍິນດີ ດັ່ງທີ່ພວກເຮົາຈະຂຸດຄົ້ນສຶກສາບາງພາກສ່ວນທີ່ສໍາຄັນຈາກພຣະທັມຟີລິບປອຍ ບົດທີ 4 ຕໍ່ລົງໄປນີ້.

**ພຣະຄັມພີກ່າວວ່າແນວໃດ?** ຟີລິບປອຍ 4:10-20 (ເບິ່ງຕາມຫົວຂໍ້ 1,2 ແລະ 3)

### ການສຶກສາພຣະຄັມພີ

**1. <u>ຟີລິບປອຍ 4:10-14</u>**

*10ເຮົາມີໃຈຊົມຊື່ນຍິນດີຢ່າງຫລວງຫລາຍໃນອົງພຣະຜູ້ເປັນເຈົ້າ ເພາະວ່າໃນທີ່ສຸດນີ້ພວກເຈົ້າໄດ້ທວນລະນຶກເຖິງເຮົາ*
*ອີກ. ພາສາເດີມວ່າ "ພວກເຈົ້າໃຫ້ການຄຶດຮອດເຮົານັ້ນບານອອກໃໝ່." ຄວາມຈິງ, ເຈົ້າທັງຫລາຍກໍເຄີຍຄຶດເຖິງເຮົາ*
*ຢູ່ ແຕ່ຍັງບໍ່ມີໂອກາດທີ່ຈະສະແດງ. 11ເຮົາບໍ່ໄດ້ຈົ່ມເຖິງເຣື່ອງການຂັດສົນເພາະເຮົາຈະມີຖານະຢ່າງໃດກໍຕາມ ເຮົາກໍ*
*ຮຽນຮູ້ແລ້ວທີ່ຈະພໍໃຈຢູ່ຢ່າງນັ້ນ. 12ເຮົາຮູ້ຈັກທີ່ຈະປະສົບກັບການຕົກຕໍ່າ ແລະຮູ້ຈັກທີ່ຈະປະສົບກັບຄວາມອຸດົມສົມ*
*ບູນ ບໍ່ວ່າໃນກໍຣະນີໃດ ເຮົາໄດ້ຮຽນຮູ້ເຖິງແງ່ຄວາມລັບ ທີ່ຈະປະສົບກັບຄວາມອີ່ມທ້ອງແລະຄວາມອຶດຢາກ, ຄວາມ*
*ສົມບູນພູນສຸກແລະຄວາມຂັດສົນ. 13ເຮົາສາມາດສູ້ກັບທຸກສິ່ງໄດ້ໂດຍພຣະອົງຜູ້ຊົງຊູກໍາລັງເຮົາ. 14ເຖິງປານນັ້ນກໍ*
*ເປັນຄວາມກະຣຸນາຂອງເຈົ້າທັງຫລາຍທີ່ໄດ້ຮ່ວມທຸກກັບເຮົາ.*

ອາຈານໂປໂລເລີ້ມຕົ້ນພຣະຄໍາຊ່ວງນີ້ດ້ວຍການເປັ່ງຄວາມຍິນດີຂອງເພິ່ນອອກ: "ເຮົາມີໃຈຊົມຊື່ນຍິນດີຢ່າງຫຼວງ

ຫຼາຍໃນອົງພຣະຜູ້ເປັນເຈົ້າ ເພາະວ່າໃນທີ່ສຸດນີ້ພວກເຈົ້າໄດ້ຫວນລະນຶກເຖິງເຮົາອີກ." ອາຈານໂປໂລມີຄວາມຕື່ນເຕັ້ນໂດຍຄວາມເອື້ອເຟື້ອເຜື່ອແຜ່, ຄວາມເມດຕາກະຣຸນາ, ແລະຄວາມອຸປຖັມຄໍ້າຊູ ຂອງຊາວຟີລິບປອຍ.

ໃນຂໍ້ 11-13, ອາຈານໂປໂລໄດ້ອະທິບາຍເຣື່ອງຄວາມພໍໃຈຂອງຄຣິສຕຽນ. ນັກປັຊະຍາໃນສມັຍອາຈານໂປໂລໄດ້ຕີຄວາມໝາຍຄໍາວ່າຄວາມພໍໃຈໝາຍເຖິງ "ຄວາມພຽງພໍ" (ການກຸ້ມຕົນເອງ). ອາຈານໂປໂລໄດ້ປະຕິຮູບໃໝ່ກ່ຽວກັບຄວາມຄິດຂອງຄວາມພໍໃຈຈາກ "*ການກຸ້ມຕົນເອງ*" ສູ່ "*ພຽງພໍໃນພຣະຄຣິດ* " (ໝາຍເຖິງພຣະຄຣິດເທົ່ານັ້ນຄືສິ່ງດຽວທີ່ພວກເຮົາຕ້ອງການ). ຄວາມພໍໃຈແມ່ນກ່ຽວກັບຄວາມເຊື່ອທີ່ວ່າພຽງແຕ່ພຣະຄຣິດກໍພໍແລ້ວ. ເຫດສະນັ້ນ...

- **ຄວາມພໍໃຈບໍ່ໄດ້ຂຶ້ນຢູ່ກັບສະຖານະການຂອງພວກເຮົາ.** ຄວາມພໍໃຈຂອງອາຈານໂປໂລບໍ່ໄດ້ເພີ້ມຂຶ້ນຫຼືໜ້ອຍລົງຕາມຊັບສົມບັດດ້ານວັດຖຸສິ່ງຂອງທີ່ເພິ່ນມີ. ເພິ່ນໄດ້ສອນວ່າຂອງມີຄ່າທີ່ຫາຍາກບໍ່ມີສ່ວນກ່ຽວຫຍັງກັບສະພາບການຂອງພວກເຮົາທີ່ເປັນຄຣິສຕຽນ ຄວາມພໍໃຈແມ່ນຢູ່ທີ່ພຣະເຢຊູຄຣິດ ພວກເຮົາຈໍາເປັນແລະຕ້ອງການແຕ່ພຽງພຣະອົງເທົ່ານັ້ນ.
- **ຄວາມພໍໃຈໄດ້ດ້ວຍການຮຽນຮູ້.** ສອງຄັ້ງ, ອາຈານໂປໂລໄດ້ເວົ້າວ່າເພິ່ນໄດ້ຮຽນຮູ້ຄວາມພໍໃຈ. ອາຈານໂປໂລໄດ້ຮູ້ຄວາມອຸດົມສົມບູນ. ເພິ່ນຮູ້ວ່າສະພາບການເປັນຢ່າງໃດທີ່ໄດ້ຖືກຕ້ອນຮັບໂດຍເສດຖີຜູ້ນຶ່ງ ຊື່ລີເດັຽທີ່ເມືອງຟີລິບປອຍ (ເບິ່ງ ກຈກ 16:14-15). ແຕ່ອາຈານໂປໂລກໍໄດ້ຮູ້ກ່ຽວກັບຄວາມຍາກລໍາບາກເໝືອນກັນຊຶ່ງເປັນຄວາມຍາກລໍາບາກທີ່ສຸດ (ອ່ານ 2 ກຣທ 11:24-27). ແຕ່ອາຈານໂປໂລກໍຮູ້ວ່າຄວາມຮັ່ງມີອຸດົມສົມບູນເປັນແນວໃດ, ແຕ່ເພິ່ນກໍເຄີຍອຶດຫິວແລະຮູ້ວ່າການນອນໜາວເປັນແນວໃດ. ເພິ່ນໄດ້ຮຽນຮູ້ຄວາມພໍໃຈຈາກທັງສອງສະພາບແວດລ້ອມແລະສະຖານະການ.

ນັກກິລາຫຼາຍຄົນມັກອ້າງອີງພຣະທັມຟີລິບປອຍ 4:13 ເພື່ອເປັນການບັນດົນໃຈ. ຄໍາວ່າ "ທຸກສິ່ງ" ຕ້ອງໄດ້ຮັບການຄອບຄອງໂດຍສະພາບການ ຊຶ່ງໃນກໍຣະນີນີ້ແມ່ນກ່ຽວກັບຄວາມພໍໃຈແລະການຄອບຄອງຊັບສົມ. "ເຮົາສາມາດສູ້ກັບທຸກສິ່ງໄດ້ໂດຍພຣະອົງຜູ້ຊົງຊູກໍາລັງເຮົາ." ອາຈານໂປໂລສາມາດພໍໃຈໃນທຸກໆສະຖານະການ ໂດຍອົງພຣະຄຣິດ. ນີ້ແລ້ວເປັນຄວາມລັບ: ພຣະຄຣິດເທົ່ານັ້ນກໍພຽງພໍແລ້ວ. ອາຈານໂປໂລບໍ່ໄດ້ກັງວົນໃຈຢູ່ກັບສະຖານະການຂອງເພິ່ນ; ແຕ່ເພິ່ນໄດ້ເອົາໃຈໃສ່ຈົດຈໍ່ຢູ່ກັບອົງພຣະເຢຊູ. ເມື່ອທ່ານຈົດຈໍ່ຕໍ່ອົງພຣະເຢຊູ, ທ່ານຈະມີຄວາມເພິ່ງພໍໃຈ.

| ທ່ານຈະບັລຍາຍຄວາມໝາຍຂອງຄໍາວ່າ ພໍໃຈ ໄດ້ດ້ວຍວິທີໃດ? |
|---|

**2. <u>ຟີລິບປອຍ 4:15-18</u>**

[15] *ແຕ່ພວກເຈົ້າ ຊາວຟີລິບປອຍ, ກໍຊາບຢູ່ແລ້ວວ່າ ໃນຂັ້ນຕົ້ນຂອງການປະກາດຂ່າວປະເສີດນັ້ນແມ່ນຕອນເມື່ອເຮົາໄດ້ຈາກແຂວງມາເກໂດເນັຽໄປ ບໍ່ມີຄຣິສຕະຈັກໃດໄດ້ມີສ່ວນຮ່ວມກັບເຮົາໃນລາຍໄດ້ລາຍຈ່າຍ ນອກຈາກພວກເຈົ້າພວກດຽວເທົ່ານັ້ນ.* [16] *ເມື່ອເຮົາຢູ່ເມືອງເທຊະໂລນີກ ພວກເຈົ້າໄດ້ຝາກຂອງມາຊ່ອຍເຮົາກວ່ານຶ່ງເທື່ອ.* [17] *ບໍ່ໃຊ້ວ່າເຮົາປາຖນາຈະໄດ້ຮັບຂອງທານຈາກເຈົ້າທັງຫລາຍ ແຕ່ເຮົາປາຖນາຢາກໃຫ້ພວກເຈົ້າໄດ້ຜົນກໍາໄລເພີ້ມຂຶ້ນໃນບັນຊີຂອງພວກເຈົ້າ.* [18] *ເຮົາໄດ້ຮັບຄົບຈໍານວນແລະມີບໍຣິບູນຢູ່ແລ້ວ ເຮົາກໍອີ່ມເຕັມຢູ່ເພາະໄດ້ຮັບຂອງຈາກທ່ານເອປາໂຟດີໂຕຊຶ່ງເຈົ້າທັງຫລາຍສົ່ງໄປໃຫ້ເປັນຂອງທານທີ່ມີກິ່ນຫອມຫວານ, ເປັນເຄື່ອງບູຊາທີ່ຊົງໂຜດຮັບ ແລະເປັນທີ່ຊອບພຣະທັຍພຣະເຈົ້າ.*

ເມື່ອພວກເຮົາພໍໃຈກັບສະຖານະການຂອງພວກເຮົາ, ພວກເຮົາຈະມີອິສຣະພາບໃນການໃຫ້ທານ (ຄວາມເຕັມໃຈບໍ່ມີໃຜບັງຄັບ). ເບິ່ງພຣະຄໍາໃນຕອນນີ້, ພວກເຮົາສາມາດເຫັນສາມທາງທີ່ອາຈານໂປໂລໄດ້ບັລຍາຍເຖິງການມີ

ສ່ວນຮ່ວມຂອງຊາວຟີລິບປອຍ ດັ່ງຕໍ່ລົງໄປນີ້:

*ອັນທີນຶ່ງ*, ການຖວາຍຂອງເຂົາເຈົ້າສະແດງອອກເຖິງການເປັນຫຸ້ນສ່ວນໃນການປະກາດຂ່າວປະເສີດ (ເບິ່ງຂໍ້ 15-16). ຂໍໃຫ້ຂ້າພະເຈົ້າກ່າວໃນທາງລົບ: ຖ້າພວກເຮົາບໍ່ຖວາຍໃຫ້ພຣະຣາຊອານາຈັກຂອງພຣະເຈົ້າ, ໝາຍຄວາມວ່າພວກເຮົາບໍ່ມີຫຸ້ນສ່ວນໃນການປະກາດຂ່າວປະເສີດຂອງພຣະເຈົ້າ: ພວກເຮົາເໝືອນຜູ້ບໍຣິໂພກ(ລູກຄ້າ). ອາຈານໂປໂລບໍ່ໄດ້ເຫັນຊາວຟີລິບປອຍເໝືອນລູກຄ້າ, ແຕ່ເພິ່ນເຫັນເຂົາເຈົ້າເໝືອນເພື່ອນຮ່ວມງານ. ຊາວຟີລິບປອຍສ່ວນຫລາຍບໍ່ເປັນຄົນຮັ່ງມີ, ແຕ່ປານນັ້ນເຂົາເຈົ້າໄດ້ມີຊື່ສຽງໃນການຖວາຍດ້ວຍຄວາມເສັຽສລະ, ດ້ວຍໃຈກວ້າງຂວາງ, ແລະດ້ວຍຄວາມເຕັມໃຈໃນການອຸປຖັມຄ້ຳຊູພັນທະກິດຂອງອາຈານໂປໂລ (ເບິ່ງ ກຈກ 16-17 ແລະ 2 ກຣທ 7-9).

*ອັນທີສອງ*, ອາຈານໂປໂລໄດ້ເນັ້ນໃຫ້ເຫັນຜົນທາງຈິດວິນຍານ ແລະນິຣັນດອນຂອງການດຳລົງຊີວິດດ້ວຍໃຈກວ້າງຂວາງເອື້ອເຟື້ອເຜື່ອແຜ່ (ຂໍ້ 17). ອາຈານໂປໂລບໍ່ໄດ້ມີຄວາມສຸກພຽງແຕ່ຊາວຟີລິບປອຍໄດ້ໃຫ້ຂອງຂວັນແກ່ເພິ່ນ. ເພິ່ນອີ່ມໃຈເພາະເພິ່ນຮູ້ຜົນກຳໄລໃນສວັນ ໝາກຜົນພຣະວິນຍານ ຊຶ່ງໄດ້ມາຈາກການກະທຳຂອງເຂົາເຈົ້າ. ອັຄສາວົກໂປໂລມີຄວາມປິຕິຍິນດີເມື່ອເຫັນຊາວຟີລິບປອຍປະຕິບັດສົມກັບເປັນຄຣິສຕຽນທີ່ແທ້ຈິງ.

*ອັນທີສາມ*, ອາຈານໂປໂລໄດ້ບັລຍາຍການເສັຽສລະຂອງຊາວຟີລິບປອຍ ແມ່ນການສະແດງອອກຂອງການນະມັສການ, ການເສັຽສລະຂອງຄຣິສຕຈັກເໝືອນດັ່ງ "ຖວາຍນ້ຳຫອມ" ຊຶ່ງເປັນທີ່ "ພໍພຣະທັຍພຣະເຈົ້າ." ນັ້ນແມ່ນການສັຣເສີນອັນສູງສົ່ງ ການກະທຳທີ່ມີຄ່າສູງ ການສະແດງອອກຂອງການນະມັສການອົງພຣະຜູ້ເປັນເຈົ້າ.

| |
|---|
| ແມ່ນຫຍັງຄືກຸນແຈໄຂໄປສູ່ການຖວາຍທີ່ເປັນທາງທີ່ພໍພຣະທັຍຂອງພຣະເຈົ້າ? |

**3. <u>ຟີລິບປອຍ 4:19-20</u>**

*[19] ແລະພຣະເຈົ້າຂອງເຮົາຈະຊົງໂຜດປະທານສາຣະພັດທີ່ພວກເຈົ້າຂາດຢູ່ນັ້ນ ຈາກຊັບອັນຮຸ່ງເຮືອງຂອງພຣະອົງໃນ*
*ພຣະເຢຊູຄຣິດ. [20] ຂໍໃຫ້ພຣະກຽດຕິຍົດຈົ່ງມີແກ່ພຣະເຈົ້າ ຄືພຣະບິດາຂອງເຮົາທັງຫລາຍສືບໄປເປັນນິດ ອາແມນ.*

ຈົ່ງຫຼຽວເບິ່ງພຣະສັນຍາທີ່ສະງ່າງາມນີ້: "ແລະພຣະເຈົ້າຂອງເຮົາຈະຊົງໂຜດປະທານສາຣະພັດທີ່ພວກເຈົ້າຂາດຢູ່ນັ້ນ ຈາກຊັບອັນຮຸ່ງເຮືອງຂອງພຣະອົງໃນພຣະເຢຊູຄຣິດ." ພຣະເຈົ້າໄດ້ໃຊ້ຊາວຟີລິບປີເປັນສະບຽງໃຫ້ອາຈານໂປໂລ (ຂໍ້ 18), ແລະໃນຂະນະນີ້ເພິ່ນຮັບປະກັນວ່າພຣະເຈົ້າຈະຊົງປະທານສິ່ງຈຳເປັນເຫຼົ່ານັ້ນໃຫ້ແກ່ພວກເຮົາ ຈາກແຫລ່ງຊັບທີ່ບໍ່ມີທີ່ສິ້ນສຸດຂອງພຣະອົງ. ແນ່ນອນ, ພວກເຮົາບໍ່ສົມຄວນຈະເຫັນພຣະເຈົ້າເໝືອນເຄື່ອງຈັກ ເອທີເອັມ (**ATM**) ຊຶ່ງແມ່ນເຄື່ອງທີ່ມີໄວ້ເພື່ອສຳລັບຕອບສນອງຄວາມໂລບຂອງພວກເຮົາເທົ່ານັ້ນ. ແຕ່ພວກເຮົາສາມາດເອີ້ນຫາພຣະເຈົ້າເພື່ອປະທານສິ່ງຈຳເປັນໃນຊີວິດປະຈຳວັນແກ່ພວກເຮົາ (ເບິ່ງ ມທ 6:11).

ຍັງຈຳໄດ້ບໍ່ ເຄັດລັບຂອງຄວາມພໍໃຈ? **ພຣະຄຣິດຊົງພໍພຽງ.** ເມື່ອໃດຫາກພວກເຮົາຮູ້ເຄັດລັບແລ້ວ, ເມື່ອນັ້ນພວກເຮົາຈະມອງເຫັນຄວາມສັມພັນລະຫວ່າງການອຸປຖັມດ້ານເສຖກິດແລະຫຸ້ນສ່ວນທີ່ແທ້ຈິງຂອງການປະກາດຂ່າວປະເສີດ. ພວກເຮົາຈະເຂົ້າໃຈວ່າການໃຫ້ທານແມ່ນທາງທີ່ພວກເຮົາສາມາດເກີດດອກອອກຜົນ, ສະສົມຊັບສົມບັດໄວ້ໃນສວັນ, ແລະເປັນການນະມັສການອົງພຣະຜູ້ເປັນເຈົ້າ. ແລະພວກເຮົາຈະຮູ້ວ່າເມື່ອພວກເຮົາດຳລົງຊີວິດດ້ວຍໃຈກວ້າງຂວາງເອື້ອເຟື້ອເຜື່ອແຜ່ ແລະດ້ວຍຄວາມເສັຽສລະ, ພວກເຮົາສາມາດວາງໃຈໃນພຣະເຈົ້າໃນການຊົງດູແລພິທັກຮັກສາພວກເຮົາ.

ຕໍ່ໄປໃນຂໍ້ 20, ອາຈານໂປໂລສະທ້ອນໃຫ້ເຫັນດ້ວຍສຸດອົກສຸດໃຈສັຣເສີນພຣະເຈົ້າພຣະບິດາ. "ຂໍໃຫ້ພຣະກຽດຕິຍົດຈົ່ງມີແກ່ພຣະເຈົ້າ ຄືພຣະບິດາຂອງເຮົາທັງຫລາຍສືບໄປເປັນນິດ *ອາແມນ*." ນີ້ແມ່ນການຕອບສນອງທີ່ເໝາະສົມຕໍ່ອົງພຣະຜູ້ເປັນເຈົ້າ, ທີ່ໄດ້ຊົງປະທານຄວາມລອດພົ້ນແກ່ພວກເຮົາ ແລະຊົງສືບຕໍ່ຊ່ວຍຊູພວກເຮົາທັງດ້ານຈິດ

ວິນຍານແລະທາງດ້ານຮ່າງກາຍ.

ພຣະເຈົ້າພຣະບິດາໄດ້ຊົງປະທານພຣະບຸດຂອງພຣະອົງເພື່ອຄວາມຕ້ອງການອັນໝົດຫວັງຂອງພວກເຮົາ. ພຣະອົງຊົງປະທານສິ່ງຈຳເປັນປະຈຳວັນໃຫ້, ແລະພຣະອົງຊົງໃຫ້ຄວາມຊົມຊື່ນຍິນດີທີ່ບໍ່ສາມາດຈະພົບໄດ້ທີ່ໃດໃນໂລກນີ້. ເຫດສະນັ້ນ, ພຣະເຈົ້າເທົ່ານັ້ນຊົງໄດ້ຮັບພຣະສະງ່າຣາສີ.

ອາຈານໂປໂລສັຣສິນພຣະເຈົ້າໃນຂະນະທີ່ເພິ່ນຣະນຶກເຖິງພຣະສະງ່າຣາສີຂອງພຣະບິດາ. ຂ້າພະເຈົ້າບໍ່ສາມາດຊ່ອຍໄດ້ ແຕ່ຊົມເຊີຍອາຈານໂປໂລກ່ຽວກັບເຣື່ອງນີ້. **ເພິ່ນໄດ້ຖືກຈອງຈຳຢູ່ໃນຄຸກ, ເຖິງປານນັ້ນຈິດວິນຍານຂອງເພິ່ນຍັງສູງສົ່ງດ້ວຍການສັຣເສີນດ້ວຍຄວາມເຕັມໃຈ!** ພວກເຮົາບໍ່ຈຳເປັນຕ້ອງມີຫລັງໃຫຍ່, ຫຼືມີເງິນລ້ານໃນທະນາຄານເພື່ອນະມັສການພຣະເຈົ້າຢ່າງສູງສົ່ງ. ພວກເຮົາຈຳເປັນຕ້ອງມີນິມິດໝາຍຂອງພຣະເຈົ້າທີ່ໃຫຍ່ກວ່ານີ້ເທົ່ານັ້ນ.

ເມື່ອພວກເຮົາໄຕ່ຕອງອີກເທື່ອນຶ່ງໃນສິ່ງທີ່ພຣະເຈົ້າອົງຍິ່ງໃຫຍ່ຊົງສາມາດເຮັດໄດ້ ພວກເຮົາຈະຖືກຍົກຂຶ້ນສູງໄດ້ເໝືອນກັນ, ໃນສິ່ງທີ່ພຣະອົງໄດ້ຊົງກະທຳສຳເຣັດໄປແລ້ວ! ສະນັ້ນໃຫ້ພວກເຮົາຮ່ວມກັນໃນພັນທະກິດວຽກງານຂອງພຣະອົງໂດຍການໃຫ້ສິ່ງທີ່ພວກເຮົາມີເພື່ອຜົນປໂຍດຂອງຄົນອື່ນ.

| |
|---|
| ແມ່ນຄວາມຈຳເປັນປະເພດໃດທີ່ພວກເຮົາມຸ້ງຫວັງຢາກໃຫ້ພຣະເຈົ້າຊົງປະທານແກ່ພວກເຮົາ? |

## ນຳໃຊ້ໃນຊີວິດ

ທ່ານຈະຖວາຍຊັບສິນເງິນທອງຊັບສົມບັດດ້ວຍວິທີໃດເພື່ອຮ່ວມງານກັບພຣະເຈົ້າໃນພຣະຣາຊກິດຂອງພຣະອົງ? ຈົ່ງພິຈາລະນາເບິ່ງຄຳແນະນຳດັ່ງຕໍ່ລົງໄປນີ້:

- **ຈັບຕາເບິ່ງຄວາມໂລບ.** ຄວາມໂລບບໍ່ແມ່ນຄວາມບາບທີ່ຄົ້ນພົບໄດ້ງ່າຍໆ. ອະທິຖານຕໍ່ພຣະເຈົ້າໃນຂະນະທີ່ທ່ານກວດກາເບິ່ງໃບລາຍງານຈາກທະນາຄານ. ຖາມຕົວເອງວ່າ: "ຂ້ອຍວາງໃຈໃນເງິນຫຼາຍກວ່າພຣະເຈົ້າຫລືບໍ່? ເງິນແລະຊັບສິນທີ່ຂ້ອຍຄອບຄອງນຳຄວາມຍິນດີມາໃຫ້ຂ້ອຍຫຼາຍກວ່າພຣະເຢຊູບໍ່?"

- **ສແວງຫາຄວາມຈຳເປັນ.** ມີຄວາມຈຳເປັນ(ຕ້ອງການ)ຫຍັງແດ່ໃນຄຣິສຕະຈັກທ້ອງຖິ່ນຂອງທ່ານທີ່ທ່ານສາມາດຕອບສນອງ? ສແວງຫາໂອກາດແບ່ງພຣະພອນແກ່ຄົນອື່ນແລະເປັນຜູ້ຮ່ວມງານປະກາດຂ່າວປະເສີດ.

- **ສແວງຫາດ້ວຍກັນ.** ພວກເຮົາສາມາດປະສົບຜົນສຳເຣັດຫຼາຍຂຶ້ນໃນອານາຈັກພຣະເຈົ້າ ເມື່ອພວກເຮົາຮ່ວມມືປະສານງານກັບຄົນອື່ນ. ໂດຍຈັດເປັນກຸ່ມ, ຫາທາງທີ່ຈະສນັບສນູນອູ່ມຊູແລະລົງທຶນໃນພັນທະກິດທີ່ປ່ຽນແປງຊີວິດ ແລະພັນທະກິດທີ່ແບ່ງປັນຂ່າວປະເສີດໃນຊຸມຊົນຂອງທ່ານ.

ທ່ານອາດຈະບໍ່ສະດວກສະບາຍໃຈໃນເມື່ອເວົ້າກ່ຽວກັບເງິນ. ແຕ່ກໍບໍ່ເປັນຫຍັງດອກ. ແຕ່ຢ່າໃຫ້ການບໍ່ສະດວກສະບາຍໃຈນັ້ນຂັດຂວາງກີດກັ້ນທ່ານຈາກປະສົບການໃນຄວາມຊົມຊື່ນຍິນດີ, ແລະຄວາມພໍໃຈທີ່ມາຈາກການຮ່ວມງານກັບພຣະເຈົ້າໃນພາຣະກິດອັນປະເສີດໃນການຖວາຍເພື່ອຜົນປໂຍດແກ່ຄົນອື່ນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ SSK**